# ສົງຄາມ ທີ່ຢູ່ ເບື້ອງຫລັງຂອງ ສົງຄາມທັງໝົດ



ສຳລັບສະບາໂຕທີ 25 ຕຸລາ 2025

“ທັງໃນສະໄໝກ່ອນ
ແລະ ນັບແຕ່ນັ້ນມາ ບໍ່
ເຄີຍມີວັນໃດທີ່ພຣະ
ເຈົ້າຢາເວໄດ້ຟັງ
ມະນຸດເໝືອນດັ່ງໃນວັນ
ນັ້ນ ດ້ວຍວ່າພຣະເຈົ້າ
ຢາເວໄດ້ເຮັດເສິກຊ່ວຍ
ຊາວອິດສະຣາເອນ”

ຢຊ 10:14



ການທຳລາຍຊາວເມືອງຄານາອານແມ່ນສົງຄາມທຳລາຍລ້າງ ທີ່ພຣະເຈົ້າຊົງບັນຊາ. ແຕ່ຖ້າວ່າພຣະເຈົ້າເປັນຄວາມຮັກແລ້ວ ພຣະອົງເຮັດແບບນີ້ເພື່ອຫຍັງ?

ເພື່ອໃຫ້ເຂົ້າໃຈເຫດຜົນຂອງສິ່ງນີ້ ພວກເຮົາຈະຕ້ອງໄດ້ເບິ່ງລົງໄປໃຫ້ເລິກຕື່ມອີກ.

ພວກເຮົາຕ້ອງເບິ່ງໃຫ້ກວ້າງກວ່າສິ່ງທີ່ເບິ່ງເຫັນ ຈົນພວກເຮົາສາມາດສັງເກດເຫັນເຖິງສົງຄາມທີ່ຢູ່ເບື້ອງຫລັງຂອງຄວາມຂັດແຍ້ງທັງໝົດ, (ລວມເຖິງການທີ່ຈະພິຊິດເອົາແຜ່ນດິນຄານາອານ): ນັ້ນຄືຄວາມຂັດແຍ້ງອັນຍິ່ງໃຫຍ່ ລະຫວ່າງພຣະຄຣິສກັບຊາຕານ ຫລື ລະຫວ່າງຄວາມດີກັບຄວາມຊົ່ວ





ຝ່າຍທີ່ຂັດແຍ້ງກັນ:

- ເຈົ້າຊາຍແຫ່ງກອງທັບຂອງພຣະເຈົ້າ.
- ເຈົ້າຊາຍແຫ່ງກອງທັບຂອງຄວາມຊົ່ວຮ້າຍ.
- ນັກຮົບທີ່ຊົງພະລັງທີ່ສຸດ.

ກົນລະຍຸດແຫ່ງຄວາມຂັດແຍ້ງ:

- ພຣະເຈົ້າຊົງຕໍ່ສູ້ເພື່ອພວກເຮົາ.
- ພວກເຮົາຕໍ່ສູ້ເພື່ອພຣະເຈົ້າ.

# ຝ່າຍທີ່ຂັດແຍ້ງ ກັນ

# ເຈົ້າຊາຍແຫ່ງກອງທັບຂອງພຣະເຈົ້າ

> “ຊາຍຜູ້ນັ້ນໄດ້ຕອບວ່າ” ເຮົາບໍ່ເປັນຝ່າຍໃດໝົດ, ເຮົາມານີ້ໃນຖານະເປັນຜູ້ບັນຊາການກອງທັບຂອງພຣະເຈົ້າຢາເວ. ໂຢຊວຍຈຶ່ງກົ້ມຂາບລົງພື້ນດິນ ແລະ ຖາມວ່າ, ທ່ານເອີຍ ຂ້ານ້ອຍເປັນຜູ້ຮັບໃຊ້ຂອງທ່ານ ທ່ານຢາກຈະໃຫ້ຂ້ານ້ອຍເຮັດຫຍັງ?”
> (ຢຊ5:14)

ໃນຂະນະທີ່ໂຢຊວຍໄດ້ອະທິຖານໃກ້ເມືອງເຢຣິໂກ ເພື່ອສະແຫວງຫາການຊີ້ງນຳຈາກພຣະເຈົ້າໃນການຍຶດເມືອງນັ້ນ ໄດ້ມີຮູບຂອງນັກຮົບຄົນໜຶ່ງຖອດດາບອອກມາຕໍ່ໜ້າລາວ (ຢຊ. 5:13).

ເມື່ອໂຢຊວຍໄດ້ຖາມລາວ, ຊາຍຄົນນັ້ນໄດ້ບອກວ່າບໍ່ໄດ້ເປັນຝ່າຍໃດໆເທິງໂລກນີ້. ແຕ່ບອກວ່າເປັນຜູ້ບັນຊາການຂອງກອງທັບຂອງພຣະເຈົ້າ (ຢຊ. 5:14).

ລາວມາໃນຖານະຜູ້ແທນຂອງພຣະເຈົ້າ ແລະ ບອກໂຢຊວຍຖອດເກີບອອກເພາະລາວກຳລັງຢືນຢູ່ບ່ອນສັກສິດ

ຄຳອະທິຖານຂອງໂຢຊວຍໄດ້ຮັບຄຳຕອບແລ້ວ. ລາວຈຶ່ງຮູ້ສຶກໂລ່ງໃຈ, ທີ່ພຣະເຈົ້າເອງເປັນຜູ້ປະຕິບັດການນີ້ທີ່ສາມາດເບິ່ງເຫັນໄດ້. ແລະ ໂຢຊວຍຈະຕ້ອງປະຕິບັດຕາມຄຳສັ່ງຂອງພຣະເຈົ້າຢາເວເທົ່ານັ້ນ ບໍ່ວ່າຈະຜ່ານທາງພຣະອົງເອງ ຫລື ຜ່ານທາງທູດຂອງພຣະອົງ ລວມເຖິງພຣະຄຳພີ





# ເຈົ້າຊາຍຂອງກອງທັບຂອງຄວາມຊົ່ວຮ້າຍ

“ລູຊີເຟີດວງດາວສ່ອງໃສໃນຕອນເຊົ້າເອີຍ ເຈົ້າໄດ້ຕົກລົງຈາກສະຫວັນແລ້ວນໍ ໃນອະດີດນັ້ນ ເຈົ້າໄດ້ຕີຊະນະ ຫລາຍໆຊົນຊາດ ແຕ່ບັດນີ້ ເຈົ້າພັດຖືກໂຍນລົງຂີ້ດິນ!” (ອຊຢ 14:12)

ເຮົາສາມາດເວົ້າໄດ້ວ່າ ລູຊີເຟີນັ້ນເປັນຜູ້ກໍ່ຕັ້ງສົງຄາມ. ມັນໄດ້ຖືກສ້າງຂຶ້ນໃນຖານະເຈົ້າຊາຍ; ເປັນເຄຣຸບຜູ້ມີຕຳແໜ່ງສູງ; ເປັນຜູ້ທີ່ຢູ່ຄຽງຂ້າງພຣະເຈົ້າ; ສະຫລາດຫລັກແຫລມ; ຄົບຖ້ວນບໍຣິບູນ (ອຊກ. 28:12-15).

ພ້ອມດ້ວຍຄວາມຄິດທີ່ອິດສະຫລະ– ປຽບເໝືອນສິ່ງທີ່ຖືກສ້າງຂຶ້ນທີ່ມີເຕັມໄປດ້ວຍສະຕິປັນຍາ– ແຕ່ ມັນຊໍ້າພັດຕັດສິນໃຈທີ່ຈະກະບົດ ແລະ ຍາດຊີງບັນລັງຂອງພຣະເຈົ້າ (ອຊຢ. 14:12-14).



ເຖິງວ່າການກະບົດຄັ້ງນີ້ມັນຈະລົ້ມເຫລວ, ແຕ່ຈັກກະວານນີ້ກໍ່ຕົກຢູ່ໃນສົງຄາມນັບຕັ້ງແຕ່ນັ້ນມາ. ຫລັງຈາກຍຶດຄອງໂລກແລ້ວ, ຊາຕານແລະເຫລົ່າທູດສະຫວັນຂອງມັນມີຈຸດປະສົງດຽວຄື: ຂັດຂວາງແຜນການການຊ່ວຍເຫລືອຂອງພຣະເຈົ້າທີ່ມີຕໍ່ມະນຸດທັງປວງ

ການພິຊິດດິນແດນຄານາອານ ເປັນການຕໍ່ສູ້ຄັ້ງສຳຄັນໃນສົງຄາມຄັ້ງນີ້





# ນັກຮົບທີ່ຊົງພະລັງທີ່ສຸດ

"ພຣະເຈົ້າຢາເວເປັນນັກຮົບຜູ້ຍິ່ງໃຫຍ່; ພຣະເຈົ້າຢາເວນັ້ນ ແມ່ນນາມອັນກຽງໄກຂອງພຣະອົງ"(ອພຍ 15:3)



ພຣະເຈົ້າເອງເປັນດັ່ງ "ພະເອກນັກຮົບ," ຜູ້ທີ່ຊົງພະລັງທີ່ສຸດໃນຈັກກະວານທັງປວງ (ອພຍ. 15:3; ພສສ. 24:8).

ແຕ່ພຣະເຈົ້າບໍ່ໄດ້ເຮັດສົງຄາມກັບມະນຸດ ແຕ່ເຮັດສົງຄາມກັບອຳນາດຝ່າຍຈິດວິນຍານທີ່ພວກເຂົາໄດ້ຍຶດຖື ເອົາ. ເພາະສະນັ້ນ ໄພພິບັດຈຶ່ງຖືກຮັບຮູ້ໃນຖານະເປັນສົງຄາມກັບເທບພະເຈົ້າຂອງຊາວເອຢິບ ຫລື ເຫລົ່າຜີ ສາດ (ອພຍ. 12:12; ພບຍສ. 32:17).



ພຣະອົງຊົງປາຖະໜາທີ່ຈະກຳຈັດຄວາມຊົ່ວຮ້າຍ ອອກໄປຈາກໂລກ. ເພາະສະນັ້ນ, ພຣະອົງຈຶ່ງໄດ້ ຊົງຂັບໄລ່, ກຳຈັດຜູ້ທີ່ເລືອກທີ່ຈະຢູ່ຂ້າງຊາຕານ ນັ້ນອອກຈາກແຜ່ນດິນແຫ່ງຄານາອານ, ແລະ ຊົງ ມອບດິນແດນໃຫ້ແກ່ຜູ້ທີ່ຢູ່ຂ້າງພຣະອົງ

ທຸກມື້ນີ້ສົງຄາມຍັງຄົງດຳເນີນຕໍ່ໄປ, ແຕ່ບໍ່ໄດ້ຕໍ່ສູ້ ເພື່ອດິນແດນ ແຕ່ເພື່ອແຕ່ລະຄົນ, ແຕ່ລະ ຄອບຄົວ. ບໍ່ມີພື້ນທີ່ທາງກາງ ມີແຕ່ຝ່າຍພຣະເຈົ້າ ຫລື ຝ່າຍຊາຕານເທົ່ານັ້ນ.



# ກົນລະຍຸດແຫ່ງ
# ຄວາມຂັດແຍ້ງ

# ພຣະເຈົ້າຊົງຕໍ່ສູ້ເພື່ອພວກເຮົາ

"ພຣະເຈົ້າຢາເວຈະສູ້ຮົບຕາງພວກເຈົ້າ, ໂດຍທີ່ພວກເຈົ້າບໍ່ຕ້ອງເຮັດຫຍັງເລີຍ" (ອພຍ 14:14)



ແຜນການຂອງພຣະເຈົ້າກໍ່ຄື ການພິຊິດດິນແດນຄານາອານດ້ວຍວິທີທົ່ວໄປໂດຍບໍ່ຕ້ອງສູ້ຮົບ (ອພຍ. 23:28). ຖ້າພວກເຂົາເຊື່ອຟັງ ສົງຄາມໂດຍການຂ້າກັນນີ້ຄົງບໍ່ເກີດຂຶ້ນ.

ພຣະຄຳພີໄດ້ບັນທຶກຕົວຢ່າງບາງສ່ວນກ່ຽວກັບສິ່ງທີ່ພຣະເຈົ້າໄດ້ຊົງກະທຳ ເພື່ອປົດປ່ອຍປະຊາຊົນຂອງພຣະອົງ ໂດຍທີ່ພວກເຂົາບໍ່ຕ້ອງຈັບເອົາອາວຸດໃດໆຂຶ້ນມາຕໍ່ສູ້ກັບສັດຕູເລີຍ



ພຣະອົງຊົງເຮັດໃຫ້ກອງທັບເອຢິບຈົມລົງໃນທະເລແດງ(ອພຍ. 14:24-28)



ພຣະອົງໃຊ້ໝາກເຫັບໂຈມຕີຊາວຄານາອານ (ຢຊ. 10:11)



ພຣະອົງຊົງທຳລາຍລ້າງຜູ້ທີ່ດູໝິ່ນເອລີຢາ(2 ກສ 1:9-10)



ພຣະອົງຊົງສົ່ງໝີໄປໂຈມຕີຜູ້ທີ່ເຍາະເຍີ້ຍເອລີຊາ (2 ກສ 2:23-24)



ພຣະອົງຊົງສ້າງສັນຕິພາບໂດຍໃຫ້ກອງທັບຊີເລຍຕາບອດ(2 ກສ 6:14-23)



ພຣະອົງຊົງເຮັດໃຫ້ຊາວອຳໂມນ ແລະ ຊາວໂມອາບຕໍ່ສູ້ກັນ (2ຂຄ. 20:15-17, 22-24)



ພຣະອົງຊົງສັງຫານຊາວອັດຊີເລຍ 185,000 ຄົນໃນຄືນດຽວ (2 ກສ 19:35)



ພຣະອົງຊົງສົ່ງໂຣກລະບາດຮ້າຍແຮງມາສົ່ງເຮໂລດ (ກຈກ 12:21-23)

# ພວກເຮົາຕໍ່ສູ້ເພື່ອພຣະເຈົ້າ

“ພວກເຂົາໄດ້ໃຊ້ດາບຂ້າທັງຍິງແລະຊາຍ ຜູ້ໜຸ່ມແລະຜູ້ເຖົ້າ, ຕະຫລອດທັງຝູງງົວ, ຝູງແກະ ແລະ ຝູງລໍດ້ວຍ” (ຢຊ 6:21)

ເຊັ່ນດຽວກັນກັບກ່ອນນ້ຳຖ້ວມໂລກ, ຫລືເມືອງໂຊໂດມແລະໂກໂມຣາ, ຊາວຄານາອານໄດ້ລະເມີດຂອບເຂດແຫ່ງພຣະຄຸນ, ແລະ ໄດ້ເຂົ້າຮ່ວມກັບຊາຕານ (ປຖມກ. 6:5; 18:20-21; 15:16).







ຍ້ອນເຫດນັ້ນພວກເຂົາທັງໝົດຈຶ່ງສົມຄວນສຳລັບການພົບກັບຄວາມຕາຍ. ການຍືດຊີວິດຂອງພວກເຂົາອອກໄປອາດຈະບໍ່ພົບກັບການປ່ຽນແປງ ສະນັ້ນຊາຕາກຳຂອງພວກເຂົາກໍ່ມີຈຸດຈົບແບບດຽວກັນ. ແລະ ພຣະເຈົ້າໄດ້ອະນຸດຍາດໃຫ້ຊາວອິດສະຣາເອວໃຊ້ໂອກາດນີ້ ແບບມີສ່ວນຮ່ວມກັບພຣະອົງໃນການທຳລາຍຄວາມບາບ (ໃນການຍຶດຄອງດິນແດນຄານາອານ),.



ເປັນຫຍັງພຣະອົງບໍ່ເຮັດຕາມແຜນການຂອງພຣະອົງດ້ວຍຕົນເອງແຕ່ຕົ້ນ? ກໍ່ຍ້ອນຄວາມບໍ່ເຊື່ອຂອງຊາວອິດສະຣາເອນ. ພວກເຂົາຈຶ່ງໄດ້ຮັບຮູ້ລົດຊາດຂອງສົງຄາມ, ແລະ ສົງຄາມຄັ້ງນີ້ເຮັດໃຫ້ຊາວອິດສະຣາເອນໄດ້ປະກາດວ່າ “ພຣະເຈົ້າຢາເວໄດ້ຢູ່ທ່າມກາງພວກເຮົາຫລືບໍ່?” (ອພຍ. 17:7-9).

ໂດຍການມີສ່ວນຮ່ວມໃນການຕໍ່ສູ້ (ທາງກາຍະພາບສຳລັບພວກເຂົາ, ທາງຈິດວິນຍານສຳລັບພວກເຮົາ), ເຮັດໃຫ້ພວກເຮົາພັດທະນາຄວາມໄວ້ວາງໃຈຢ່າງບໍ່ມີເງື່ອນໄຂໃນຄວາມຊ່ວຍເຫລືອຈາກພຣະເຈົ້າ

“ສົງຄາມການຕໍ່ສູ້ເກີດຂຶ້ນທຸກໆມື້. ສົງຄາມໃຫຍ່ກຳລັງດຳເນີນຢູ່ເໜືອທຸກໆດວງວິນຍານ ລະຫວ່າງເຈົ້າແຫ່ງຄວາມມືດ ແລະ ເຈົ້າແຫ່ງຊີວິດ, ໃນຖານະຕົວແທນຂອງພຣະເຈົ້າ.... ທ່ານທັງຫລາຍຈົ່ງຍອມຈຳນົນຕໍ່ພຣະອົງ ເພື່ອພຣະອົງຈະຊົງວາງແຜນຊີ້ນຳ ແລະ ຕໍ່ສູ້ແທນພວກເຮົາ , ໂດຍຄວາມຮ່ວມມືຂອງພວກເຮົາກັບພຣະເຈົ້າ ພຣະອົງຈະຊົງສະຖິດຢູ່ກັບພວກເຮົາໃນການຕໍ່ສູ້ປະຈຳວັນ ເພື່ອພວກເຮົາຈະໄດ້ຍຶດໝັ້ນໃນຫລັກການ ເພື່ອຄວາມປາຖະໜາທີ່ຈະຕໍ່ສູ້ກັບອຳນາດມືດນັ້ນ. ເຊິ່ງຈະໄດ້ຖືກປາບປາມໂດຍພຣະຄຸນຂອງພຣະຄຣິສ ເພື່ອພວກເຮົາຈະໄດ້ເປັນຜູ້ມີໄຊຊະນະ ໂດຍພຣະອົງຜູ້ຊົງຮັກເຮົາ.

EGW (Conflict and Courage, April 21)